ອາການຂອງບັນຫາການພະນັນ

ການພະນັນສາມາດເຮັດໃຫ້ເກີດ

- ສຸຂພາບບໍ່ດີເນື່ອງມາຈາກຄວາມກົດດັນເຣື່ອງການເງິນ (ຕົວຢ່າງ ນອນບໍ່ຫຼັບແລະກິນບໍ່ແຊບ)
- ການຜິດຖຽງກັນກັບຄົນໃນຄອບຄົວຄອບຄົວ ແລະ ໝູ່ເພື່ອນ ກ່ຽວກັບເຣື່ອງເງິນ
- ການໂທດຕົວເອງ ແລະ ທຸດທວີດ
- ມີຄວາມຢ້ານກົວວ່າອະນາຄົດຈະເປັນຢ່າງໃດ

ໄດ້ມີການຄາດຄະເນໄວ້ວ່າ ຄົນມີບັນຫາການພະນັນສູ້ໜຶ່ງຈະສ້າງ ບັນຫາກະທົບກະເທືອນໄປອີກເຈັດຄົນ.

Multicultural Problem Gambling Service for NSW
strengthening people and families

ຈົ່ງຕິດຕໍ່ພວກເຮົາທີ່:

Multicultural Problem Gambling Service for NSW
PO Box 7118 Parramatta BC NSW 2150
ໂທຣະສັບ: (61 2) 9840 3329
ແຟັກຊ໌: (61 2) 8838 2165
ເບີໂທຣະສັບຟຣີ: 1800 856 800
ອີເມລ์: mpgs@wsahs.nsw.gov.au
ເວັບໄຊຕ์: www.dhi.gov.au/mpgs

Diversity Health Institute
Quality Health Care for a Diverse Australia

The Multicultural Problem Gambling Service ເປັນຄວາມຄິດລິເລີ່ມຮ່ວມຂອງ Community Relation Commission For a multicultural NSW ແລະ Sydney West Area Health Service. ການຊ່ວຍເຫຼືອດ້ານການເງິນສຳລັບໂຄງການນີ້ ແມ່ນໄດ້ຮັບການອຸປຖັມຈາກຣັຖບານຣັດ ນິວເຊົ່ທ໌ເວລส์ ພາຍໃຕ້ ກອງທຶນ Responsible Gambling Fund (RGF). ເຖິງຢ່າງໃດກໍ່ດີ, ຄວາມຄິດເຫັນຕ່າງໆທີ່ກ່າວມາໃນເຈ້ຍຂໍ້ມູນນີ້ ເປັນຄວາມຄິດເຫັນຂອງ ຜູ້ຂຽນແຕ່ພຽງຜູ້ດຽວເທົ່ານັ້ນ.

Lao

Multicultural Problem Gambling Service for NSW

strengthening people and families

ໂທຣະສັບຟຣີ
1800 856 800

ບໍຣິການ ຟຣີ ດ້ານໃຫ້ຄຳປຶກສາຫາລື ແລະ ການອູ້ມຊູ ແກ່ນັກພະນັນທີ່ມີບັນຫາ ແລະ ແກ່ຄອບຄົວຂອງ ພວກເຂົາເຈົ້າ ທີ່ມາຈາກເຊື້ອຊາດຕ່າງໆ.

ໂຄງການ Multicultural Problem Gambling Service - MPGS (ການບໍລິການຊ່ວຍເຫລືອບັນຫາດ້ານການພະນັນນາງວັທນະທັນ) ແຫ່ງຣັດ ນຊວ ໃຫ້ບໍລິການຟຣີ ແລະ ເກັບເປັນຄວາມລັບ ໃນດ້ານການຊ່ວຍເຫຼືອແກ່ນັກພະນັນທີ່ມີບັນຫາແລະ ຄອບຄົວຂອງພວກເຂົາເຈົ້າ.
ຜູ້ໃຫ້ຄຳ ປຶກສາຫາລືຂອງພວກເຮົາ ເປັນຜູ້ທີ່ມີຄຸນວຸດທິແລະມີປະສົບການ ຊຶ່ງປາກພາ ສາຂອງທ່ານ ແລະ ມີຄວາມເຂົ້າໃຈໃນວັທນະ ທັນຂອງທ່ານເປັນຢ່າງດີ.

ບໍລິການຕ່າງໆສຳລັບນັກພະ ນັນທີ່ມີບັນຫາ ແລະ ຄອບຄົວຂອງພວກເຂົາເຈົ້າ

- ໃຫ້ຄຳປຶກສາຫາລືຟຣີ ແລະ ເກັບເປັນຄວາມລັບໂດຍທາງໂທຣະສັບ
- ໃຫ້ຄຳປຶກສາຫາລືແບບໜ້າຕໍ່ໜ້າ/ຄອບຄົວ ດ້ວຍຄວາມຊຸຮວຊານ, ເປັນຫຼາຍພາສາ
- ໃຫ້ຂໍ້ມູນ ຄຳແນະນຳ ແລະ ການແນະນຳສົ່ງຕໍ່ໄປ ຫາບໍລິການອື່ນໆ ໂດຍທາງໂທຣະສັບ (ຕົວຢ່າງເຊັ່ນ ໃຫ້ຄຳປຶກສາ ຫາລືດ້ານການເງິນ)
- ໂຄງການສຶດສອນ ຊຸມຊົນ

ຈົ່ງຕິດຕໍ່ພວກເຮົາຕາມເບີໂທຣະສັບ ເລກ 1800 856 800 ໃນເວລາລະຫວ່າງ 8.30ໂມງເຊົ້າ ແລະ 5.00ໂມງແລງ ຈາກວັນຈັນ ຫາ ວັນສຸກ

ສຳລັບບໍລິການນອກເວລາຣາຊການນັ້ນ ກະຣຸນາຕິດຕໍ່ G-line (NSW) ສາຍໂທຣະສັບໃຫ້ຄວາມຊ່ວຍເຫຼືອ ດ້ານ ບັນຫາການພະນັນ ການໃຫ້ຂໍ້ມູນ ໃຫ້ຄຳປຶກສາຫາລື ແລະ ການແນະນຳສົ່ງຕໍ່ຫາບໍລິການອື່ນໆ ຕາມເບີໂທຣະສັບ ເລກ 1800 633 635 (TTY 1800 633 649) ຊຶ່ງເປີດບໍລິການຕລອດ 24ຊົ່ວໂມງ ເຈັດມື້ຕໍ່ອາທິດ.

ສຳລັບຂັນດາຜູ້ໃຫ້ບໍລິການຕ່າງໆ

ພວກເຮົາໃຫ້ບໍລິການຕ່າງໆດັ່ງຕໍ່ລົງໄປນີ້ ແກ່ບັນດາຜູ້ໃຫ້ບໍລິການຕ່າງໆໃນຣັດ ນຊວ:

- ການເຝິກຫັດເຣື່ອງວັທນະທັນກ່ຽວພັນກັບບັນຫາ ການພະນັນ ໃຫ້ແກ່ອົງການທີ່ໃຫ້ບໍລິການດ້ານບັນຫາ ການພະນັນ ໃນຊຸມຊົນອອັສເຕຣລຽນ
- ຮັບເອົາການແນະນຳສົ່ງຕໍ່ຈາກບໍລິການອື່ນໆ
- ໃຫ້ການປຶກສາແລະແນະນຳແບບສະເພາະ ທາງດ້ານວິເຄາະອາການແລະ ແບບທີ່ເໝາະສົມກັບວັທນະທັນຕ່າງໆ

ລັກສະນະຂອງບັນຫາການພະນັນ

ທ່ານອາດມີບັນຫາການພະນັນ ຖ້າທ່ານ:

- ຄິດເຣື່ອງການພະນັນທຸກໆມື້
- ຮູ້ສຶກອຸກໃຈແລ້ວໄປຫຼີ້ນການພະນັນ
- ຢືມເງິນເພື່ອຫຼີ້ນການພະນັນ
- ປິດບັງການຫຼີ້ນການພະນັນຈາກຄອບຄົວ ແລະ ໝູ່ເພື່ອນ

ຜົນຕາມມາຂອງບັນຫາການພະນັນ

ການພະນັນສາມາດເຮັດໃຫ້ທ່ານ:

- ຮູ້ສຶກອັບອາຍ
- ຮູ້ສຶກອຸກໃຈ ແລະ ກັງວົນ
- ປະສົບກັບບັນຫາເຣື່ອງເງິນ
- ປະສົບກັບຄວາມແຕກແຍກຂອງຄອບຄົວ ແລະ ຄວາມສັມພັນ